ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ປົດສະຫຼຸບການເຄື່ອນໄຫວທຸລະກິດ

ສຳລັບງວດສາມເດືອນສິ້ນສຸດ ວັນທີ 31 ມີນາ 2021

ບົດສະຫຼຸບການເຄື່ອນໄຫວທຸລະກິດ 3 ເດືອນປີ 2021

ສາລະບານ

ໜ້າ

1. ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ.....1

2. ປະຫວັດຄວາມເປັນມາ.....1

3. ປັດຊະຍາ ແລະ ການດຳເນີນທຸລະກິດ.....5

3.1 ປັດຊະຍາບໍລິສັດ.....5

3.2 ການດຳເນີນທຸລະກິດຫຼັກ.....6

4. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ.....8

4.1 ໂຄງຮ່າງການຈັດຕັ້ງ.....8

4.2 ຄະນະກຳມະການຂອງສະພາບໍລິຫານ.....9

4.2.1 ຄະນະກຳມະການກວດສອບ.....10

4.2.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ.....10

4.2.3 ຄະນະກຳມະການຄັດເລືອກ.....11

4.2.4 ຄະນະກຳມະການກຳນົດຄ່າຕອບແທນ.....11

4.2.5 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ.....11

5. ຜົນການດຳເນີນທຸລະກິດ.....12

5.1 ຜົນການດຳເນີນດ້ານການຕະຫຼາດ.....12

5.2 ລາຍຮັບ.....12

5.3 ລາຍຈ່າຍ.....13

5.4 ກຳໄລສຸດທິ ແລະ ອັດຕາກຳໄລສຸດທິ.....13

5.5 ການມອບພັນທະອາກອນ.....14

1. ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປຂອງບໍລິສັດ

ຜູ້ສະເໜີອອກຈຳໜ່າຍ	:	ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ປະເພດທຸລະກິດ	:	ໃຫ້ບໍລິການເຊົ່າສິນເຊື່ອ
ສັນຍາລັກ	:	ມຫທຊ
ສຳນັກງານໃຫຍ່	:	ເຮືອນເລກທີ 628, (ຫຼັກ5) ຖະໜົນໄກສອນພົມວິຫານ,ບ້ານໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ໃບອະນຸຍາດລົງທຶນຕ່າງປະເທດ	:	ໃບອະນຸຍາດລົງທຶນຕ່າງປະເທດ, ເລກທີ:196-11/ຜທ/ລທ3, ລົງວັນທີ: 10 ສິງຫາ 2011
ໃບທະບຽນວິສາຫະກິດ	:	0902/ຈທວ ລົງວັນທີ 10 ມີຖຸນາ 2019
ເລກປະຈຳຕົວຜູ້ເສຍອາກອນ	:	725714405-9-00
ທຶນຈົດທະບຽນ	:	40.000.000.000 ກີບ
ຈຳນວນຮຸ້ນທັງໝົດ	:	40.000.000 ຮຸ້ນ
ອີເມວ	:	info@mahathuen.com
ເວັບໄຊ	:	www.mahathuen.com
ໂທລະສັບ	:	(856) 21 418065
ໂທລະສານ	:	(856) 21 418066

2. ປະຫວັດຄວາມເປັນມາ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ: "**ບໍລິສັດ**") ໄດ້ສ້າງຕັ້ງຂຶ້ນໃນວັນທີ 02 ກັນຍາ 2011 ໃນຮູບແບບ ບໍລິສັດຈຳກັດ ດ້ວຍທຶນຈົດທະບຽນ 300.000 ໂດລາສະຫະລັດ. ບໍລິສັດໄດ້ຮັບໃບທະບຽນວິສາຫະກິດເລກທີ 3151/ຫຈທ, ປະເພດທຸລະກິດແມ່ນການໃຫ້ບໍລິການເຊົ່າສິນເຊື່ອ (ສັງຫາລິມາຊັບ), ຊຶ່ງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຖືຮຸ້ນໂດຍນັກທຸລະກິດຄົນລາວ 12

ສ່ວນຮ້ອຍ ແລະ ນັກທຸລະກິດຄົນໄທ 88 ສ່ວນຮ້ອຍ. ຜູ້ຖືຮຸ້ນຝ່າຍລາວແມ່ນ ທ່ານ ນາງ ອິນທະວິໄລ ອຸດົມ ແລະ ຜູ້ຖືຮຸ້ນຝ່າຍໄທແມ່ນ ທ່ານ ຊາຄຣິດ ນັກສອນ, ທັງສອງ ທ່ານ ມີປະສົບການໃນການເຮັດ ທຸລະກິດໃນ ສປປ ລາວ ມາຫຼາຍກວ່າ 20 ປີ.

ທຸລະກິດເຊົ່າສິນເຊື່ອ (Leasing) ໃນ ສປປ ລາວ ເປັນທຸລະກິດທີ່ຕ້ອງໄດ້ຮັບອະນຸຍາດໃນການ ດຳເນີນທຸລະກິດ ຈາກທະນາຄານແຫ່ງ ສປປ ລາວ ໂດຍປະຈຸບັນບໍລິສັດເຊົ່າສິນເຊື່ອຢູ່ໃນການຄຸ້ມຄອງ ຈາກກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ.

ບໍລິສັດ ເຄື່ອນໄຫວ ແລະ ດຳເນີນທຸລະກິດທີ່ກ່ຽວກັບ ບໍລິການເຊົ່າສິນເຊື່ອ (ສັງຫາລິມະຊັບ). ບໍລິສັດດຳເນີນທຸລະກິດດ້ານເຊົ່າສິນເຊື່ອລາຍຍ່ອຍ (Retail finance) ໃນ ສປປ ລາວ ໂດຍໃນເບື້ອງ ຕົ້ນຈະໄດ້ດຳເນີນທຸລະກິດການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ມາຈາກປະເທດຍີ່ປຸ່ນຄື: ຍີ່ຫໍ້ ຮອນດ້າ (HONDA), ຊູຊູກິ (SUZUKI), ຢາມາຮາ (YAMAHA) ແລະ ອື່ນໆ ເປັນທຸລະກິດຫຼັກກ່ອນ ເພື່ອເປັນ ການສ້າງຖານທຸລະກິດ, ສຶກສາຮຽນຮູ້, ສະສົມປະສົບການໃຫ້ກັບອົງກອນ ລວມທັງການສ້າງບຸກຄະລາ ກອນ, ລະບົບການເຮັດວຽກທີ່ ເໝາະສົມ ແລະ ຮັດກຸມ ຕະຫຼອດຈົນເຖິງການຮຽນຮູ້ພຶດຕິກຳ ແລະ ການ ດຳເນີນທຸລະກິດໃນ ສປປ ລາວ ຈາກນັ້ນຈະຂະຫຍາຍການລົງທຶນໃນທຸລະກິດສິນເຊື່ອລາຍຍ່ອຍ ປະເພດອື່ນໆຕໍ່ໄປ.

ນະໂຍບາຍການດຳເນີນທຸລະກິດໃນຊ່ວງທຳອິດທີ່ເປີດດຳເນີນທຸລະກິດ ຕາມແຜນໄລຍະສັ້ນ 3 ປີ ຈະເນັ້ນການສ້າງອົງກອນ ແລະ ບຸກຄະລາກອນເປັນສຳຄັນ. ນະໂຍບາຍການເຮັດທຸລະກິດຈຶ່ງອອກແນວ ອະນຸລັກນິຍົມ (Conservative) ໃນດ້ານການຕະຫຼາດ ແລະ ການພິຈາລະນາການໃຫ້ເຊົ່າສິນເຊື່ອ ມີ ແຜນການປະຕິບັດງານທີ່ຊັດເຈນ, ມີການຄາດຄະເນທາງການເງິນເພື່ອອະນຸມັດໃຫ້ບໍລິການດ້ານການເຊົ່າ ສິນເຊື່ອຂະໜາດນ້ອຍ ໃຊ້ເງິນລົງທຶນທີ່ບໍ່ສູງຫຼາຍ, ແຕ່ຈະກຳນົດຮູບແບບການປະຕິບັດວຽກງານແບບມື ອາຊີບ ຈຶ່ງກຳນົດໃຫ້ມີການສ້າງລະບຽບພາຍໃນ ໃນການປະຕິບັດ ຕະຫຼອດຈົນຂໍ້ກຳນົດຕ່າງໆ ໃນການ ພິຈາລະນາການໃຫ້ເຊົ່າສິນເຊື່ອທີ່ຊັດເຈນ ແຕ່ສາມາດຢືດຢຸ່ນໄດ້ຕາມຄວາມເໝາະສົມກັບສະພາບການ ແລະ ການແຂ່ງຂັນຂອງທຸລະກິດ.

ໄລຍະປີ 2014 - 2016 ບໍລິສັດ ໄດ້ເນັ້ນການຂະຫຍາຍຂະໜາດຂອງຖານລູກຄ້າ ແລະ ສ້າງ ຄວາມເປັນຜູ້ນຳຕະຫຼາດ, ເພີ່ມອັດຕາສ່ວນຄອງຕະຫຼາດໃຫ້ໄດ້ຫຼາຍຂຶ້ນ ເພື່ອຂະຫຍາຍສາຂາ ແລະ ໜ່ ວຍບໍລິການໃນນະຄອນຫຼວງວຽງຈັນໃຫ້ຫຼາຍຂຶ້ນໃນອານາຄົດ. ນອກຈາກນີ້ ບໍລິສັດ ມີແຜນໃຫ້ມີການ ເພີ່ມຜະລິດຕະພັນໃຫ້ຫຼາຍຂຶ້ນເຊັ່ນ: ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ (Used motorcycle) ລວມເຖິງ ການໃຫ້ບໍລິການດ້ານການໃຫ້ສິນເຊື່ອຄືນໃໝ່ (Refinance) ຈາກຖານລູກຄ້າເກົ່າທີ່ມີປະຫວັດ ການຊຳລະເງິນທີ່ດີ ເພື່ອເປັນການສ້າງຖານລູກຄ້າ ເພື່ອໄປຂະຫຍາຍຜະລິດຕະພັນປະເພດອື່ນໆ.

ນັບແຕ່ປີ 2017 ເປັນຕົ້ນໄປ ບໍລິສັດ ມີແຜນຈະຂະຫຍາຍສາຂາ ແລະ ໜ່ ວຍບໍລິການໄປຕ່າງ ແຂວງ ແລະ ຂະຫຍາຍທຸລະກິດເຊົ່າສິນເຊື່ອປະເພດອື່ນໆ, ໂດຍມີແຜນການລະດົມທຶນໃນຕະຫຼາດຫຼັກຊັບ

ລາວ (Lao Securities Exchange ຫຼື LSX), ຊຶ່ງຈະຕ້ອງມີການກຳນົດຍຸດທະສາດໃນການດຳເນີນທຸລະກິດໃນທາງບຸກ (Aggressive) ໃຫ້ຫຼາຍຂຶ້ນ, ໂດຍຈະຕ້ອງກຳນົດວິທີການຄວບຄຸມພາຍໃນທີ່ຮັດກຸມ ລວມເຖິງການບໍລິຫານຄວາມສ່ຽງທີ່ເໝາະສົມກັບຕະຫຼາດ ສ້າງອົງກອນໃຫ້ມີການບໍລິຫານຈັດການທີ່ດີ ແລະ ສ້າງຄວາມໝັ້ນຄົງໃຫ້ແກ່ທຸລະກິດ ໂດຍຈະຕ້ອງສ້າງຄວາມສົມດຸນລະຫວ່າງລູກຄ້າ, ຄູ່ຄ້າ, ນັກລົງທຶນ ແລະ ຜູ້ຖືຮຸ້ນຂອງບໍລິສັດ, ເນື່ອງຈາກບໍລິສັດ ກະກຽມເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ບໍລິສັດໄດ້ຫັນປ່ຽນຮູບແບບເປັນ ບໍລິສັດ ມະຫາຊົນ ໃນວັນທີ 20 ພະຈິກ 2017 ໂດຍມີທຶນຈົດທະບຽນ 27.760.000.000 ກີບ ຊຶ່ງດຳເນີນທຸລະກິດການໃຫ້ບໍລິການ ເຊົ່າສິນເຊື່ອ (ສັງຫາລິມາຊັບ) ພາຍໃຕ້ກົດໝາຍ ຂອງ ສປປ ລາວ (ຊຶ່ງຕໍ່ໄປນີ້ ເອີ້ນວ່າ “ວັນທີປ່ຽນຮູບແບບບໍລິສັດ”) ໂດຍມີຜູ້ຖືຮຸ້ນ ຈາກບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ ຈຳນວນ 97,5792507204611 ສ່ວນຮ້ອຍ ຊຶ່ງເປັນບໍລິສັດ ຈາກປະເທດໄທ, ທ່ານ ນາງ ອິນທະວິໄລ ອຸດົມ ຖືຮຸ້ນຈຳນວນ 2,4204322766571 ສ່ວນຮ້ອຍ ແລະ ຜູ້ຖືຮຸ້ນລາຍຍ່ອຍ 11 ທ່ານ ແມ່ນຖືຮຸ້ນຈຳນວນ 0,0003170028818 ສ່ວນຮ້ອຍ.

ນັບຕັ້ງແຕ່ບໍລິສັດສ້າງຕັ້ງຂຶ້ນ ຈົນມາເຖິງກ່ອນການອອກຈຳໜ່າຍຮຸ້ນ (IPO) ບໍລິສັດ ໄດ້ມີການເພີ່ມທຶນຈົດທະບຽນ 6 ຄັ້ງ. ໃນມື້ສ້າງຕັ້ງບໍລິສັດມີທຶນຈົດທະບຽນ 300.000 ໂດລາສະຫະລັດ ຕໍ່ມາໃນປີ 2012 ໄດ້ເພີ່ມທຶນ ແລະ ປ່ຽນທຶນຈົດທະບຽນມາເປັນສະກຸນເງິນກີບ 5,6 ຕື້ກີບ. ໃນປີ 2014 ໄດ້ມີການເພີ່ມທຶນຈົດທະບຽນ 2 ຄັ້ງ ຄື: 12,8 ຕື້ກີບ ແລະ 17,76 ຕື້ກີບ ຕາມລຳດັບ. ໃນປີ 2015 ແມ່ນເພີ່ມທຶນຈົດທະບຽນມາເປັນ 23,36 ຕື້ກີບ ແລະ ໃນປີ 2016 ກໍ່ໄດ້ມີການເພີ່ມທຶນຈົດທະບຽນ 2 ຄັ້ງຄື: 25,6 ຕື້ກີບ ແລະ 27,76 ຕື້ກີບ ຕາມລຳດັບ.

ປີ 2018 ບໍລິສັດ ໄດ້ຈັດຕັ້ງສາຂາແຫ່ງທຳອິດຂຶ້ນທີ່ ແຂວງ ສະຫວັນນະເຂດ ເພື່ອທີ່ຈະໃຫ້ບໍລິການສິນເຊື່ອສຳລັບລູກຄ້າ ໂດຍໃນໄລຍະທຳອິດຈະໃຫ້ບໍລິການເຊົ່າສິນເຊື່ອສຳລັບລົດຈັກກ່ອນ ແລະ ຈະຂະຫຍາຍໃຫ້ການບໍລິການຜະລິດຕະພັນອື່ນໆຕໍ່ໄປ ສາຂາສະຫວັນນະເຂດຕັ້ງຢູ່ ເຮືອນເລກທີ 013 ໜ່ວຍ 1 ບ້ານ ລັດຕະນະລັງສີໄຕ້ ເມືອງ ໄກສອນພົມວິຫານ ແຂວງ ສະຫວັນນະເຂດ

ໃນປີນີ້ ບໍລິສັດໄດ້ອອກຮຸ້ນເພີ່ມທຶນໃໝ່ ຈຳນວນ 12.240.000 ຮຸ້ນ ລາຄາຕາມມູນຄ່າ 1.000 ກີບຕໍ່ຮຸ້ນ ເພື່ອຈຳໜ່າຍໃຫ້ກັບປະຊາຊົນທົ່ວໄປ (Initial Public Officering) ໂດຍໄດ້ຮັບອະນຸຍາດຈາກ ຄະນະກຳມະການຄຸ້ມຄອງຫຼັກຊັບ ເມື່ອວັນທີ 13 ມີຖຸນາ 2018 ພາຍຫຼັງຈາກການຈຳໜ່າຍຮຸ້ນເພີ່ມທຶນ ແລ້ວເຮັດໃຫ້ບໍລິສັດມີຮຸ້ນຈຳນວນ 40.000.000 ຮຸ້ນ ຫຼື ມີທຶນຈົດທະບຽນລວມທັງໝົດ 40.000.000.000 ກີບ ຊຶ່ງບໍລິສັດໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ເມື່ອວັນທີ 18 ກັນຍາ 2018 ຖືເປັນບໍລິສັດລຳດັບທີ 8 ຂອງຕະຫຼາດຫຼັກຊັບລາວ.

ປີ 2019 ບໍລິສັດ ໄດ້ຈັດຕັ້ງໜ່ວຍບໍລິການລູກຄ້າຂຶ້ນ 1 ແຫ່ງໃນແຂວງ ສະຫວັນນະເຂດ ກໍຄື ໜ່ວຍບໍລິການ ດົງເຫັນ ມີທີ່ຕັ້ງຢູ່ ເຮືອນເລກທີ 254/259 ບ້ານດົງເຫັນ ຖະໜົນເສັ້ນທາງເລກທີ 9 ເມືອງ ອາດສະພັງທອງ ແຂວງ ສະຫວັນນະເຂດ

ໃນເດືອນ ມິຖຸນາ ປີດຽວກັນນີ້ ບໍລິສັດໄດ້ເລີ່ມໃຫ້ບໍລິການເຊົ່າສິນເຊື່ອສຳລັບອຸປະກອນທາງການກະເສດ ເຊິ່ງເລີ່ມຕົ້ນຈາກລົດໄຖນາ ປະເພດເດີນຕາມ ແລະ ເມື່ອມີຄວາມພ້ອມຫຼາຍຂຶ້ນຈະຂະຫຍາຍການໃຫ້ບໍລິການເຊົ່າສິນເຊື່ອໃຫ້ກວມລວມເຄື່ອງມືທາງການກະເສດໃຫ້ມີຄວາມຫຼາກຫຼາຍຂຶ້ນ

ປີ 2020 ບໍລິສັດ ໄດ້ເພີ່ມຜະລິດຕະພັນໃຫມ່ ໂດຍເລີ່ມໃຫ້ບໍລິການເຊົ່າສິນເຊື່ອຄືນໃຫມ່ (Refinance) ສຳລັບລົດທີ່ໃຊ້ແລ້ວ (Used car) ເພື່ອເພີ່ມຄວາມຫຼາກຫຼາຍຂອງຜະລິດຕະພັນ ສຳລັບເປັນທາງເລືອກໃຫ້ກັບລູກຄ້າຂອງບໍລິສັດ

ເມື່ອວັນທີ 4 ທັນວາ 2020 ກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປີ 2020 ໄດ້ມີມະຕິເຫັນດີດ້ວຍມະຕິສະເພາະ ດັ່ງນີ້:

1. ແກ້ໄຂສັດສ່ວນຫຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດລັກຊັບລາວ ເປັນ ສັດສ່ວນສູງສຸດຕາມທີ່ຕະຫຼາດຫຼັກຊັບລາວ ຫຼື ສຳນັກງານຄຸ້ມຄອງຫຼັກຊັບລາວ ຫຼື ກົດໝາຍທີ່ກ່ຽວຂ້ອງກຳນົດໄວ້ ໂດຍມອບອຳນາດໃຫ້ຝ່າຍບໍລິຫານເປັນຜູ້ດຳເນີນການໃນດ້ານເອກະສານຕ່າງໆ ຈົນກວ່າຈະດຳເນີນການແລ້ວສຳເລັດ
2. ປ່ຽນແປງມູນຄ່າກຳນົດ (Par Value) ຈາກ 1.000 ກີບ ເປັນ 100 ກີບ ແລະ ເພີ່ມຈຳນວນຮຸ້ນຈາກ 40.000.000 ຮຸ້ນ ເປັນ 400.000.000 ຮຸ້ນ ໂດຍມີທຶນຈົດທະບຽນ 40.000.000.000 ກີບ ເທົ່າເດີມ ໂດຍມອບອຳນາດໃຫ້ຝ່າຍບໍລິຫານເປັນຜູ້ດຳເນີນການໃນດ້ານເອກະສານຕ່າງໆ ຈົນກວ່າຈະດຳເນີນການແລ້ວສຳເລັດ

3. ປັດຊະຍາ ແລະ ການດຳເນີນທຸລະກິດຫຼັກ

3.1 ປັດຊະຍາບໍລິສັດ

ຄຳຂວັນ (Slogan)

“ທຸກເລື່ອງສິນເຊື່ອເປັນໄປໄດ້ທີ່ ມະຫະທຶນ”

“All Financial is possible here”

ວິໄສທັດ (Vision)

ມະຫະທຶນ ມຸ່ງໝັ້ນທີ່ຈະເປັນບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ເປັນໜຶ່ງໃນຜູ່ນຳການໃຫ້ບໍລິການສິນເຊື່ອ ລົດຈັກ ແກ່ຄົນລາວ

“ Be a Listied company on LSX and the leader of Leasing company for Motorcycle in Lao PDR”

ພາລະກິດ (Mission)

“ມະຫະທຶນ ເຊົ່າສິນເຊື່ອ ສິນເຊື່ອເພື່ອທຸກຄົນ” ຄືຄຳໝັ້ນສັນຍາໃນການດຳເນີນທຸລະກິດຂອງເຮົາທີ່ໃຫ້ກັບຜູ່ທີ່ມີສ່ວນໄດ້ສ່ວນເສຍ ໂດຍມີພາລະກິດດັ່ງນີ້:

ຕໍ່ລູກຄ້າ : ເປັນໜຶ່ງໃນໃຈລູກຄ້າດ້ວຍທີມງານມືອາຊີບໃຫ້ບໍລິການທີ່ປະທັບໃຈ ຍຸດຕິທຳ ແລະ ນະວັດຕະກຳທາງການເງິນທີທັນສະໄໝ

ຕໍ່ພະນັກງານ : ພັດທະນາບຸກຄະລາກອນໃຫ້ເປັນມືອາຊີບ ແລະ ສ້າງຄວາມໝັ້ນຄົງໃນຊີວິດການເຮັດວຽກງານ ແລະ ຊີວິດຄອບຄົວ

ຕໍ່ຜູ່ຖືຮຸ້ນ : ນຳບໍລິສັດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ໃຫ້ຜົນຕອບແທນໃນລະດັບທີ່ໜ້າລົງທຶນ

ຕໍ່ຄູ່ຄ້າ : ສ້າງຄວາມໄວ້ວາງໃຈຕໍ່ພັນທະມິດທາງທຸລະກິດທີ່ພ້ອມຈະເຕີບໂຕ ແລະ ປະສົບຄວາມສຳເລັດໄປນຳກັນ

ຕໍ່ສັງຄົມ : ເພື່ອເປັນທາງເລືອກໃນການລົງທຶນສຳລັບປະຊາຊົນລາວ

3.2 ການດຳເນີນທຸລະກິດຫຼັກ

ບໍລິສັດປະກອບທຸລະກິດການໃຫ້ບໍລິການເຊົ່າສິນເຊື່ອລົດຈັກ ໂດຍແບ່ງອອກເປັນ 3 ລັກສະນະ ການໃຫ້ບໍລິການດັ່ງນີ້:

1. ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກໃໝ່ (ລົດມືໜຶ່ງ)
2. ການໃຫ້ບໍລິການສິນເຊື່ອລົດຈັກທີ່ໃຊ້ແລ້ວ (ລົດມືສອງ)
3. ສິນເຊື່ອລົດຈັກຄືນໃຫມ່

3.2.1 ບໍລິການເຊົ່າສິນເຊື່ອລົດຈັກໃໝ່ (ມືໜຶ່ງ)

ບໍລິສັດ ປະກອບທຸລະກິດໃຫ້ບໍລິການເຊົ່າສິນເຊື່ອລົດຈັກ ໂດຍເນັ້ນລົດຈັກຍີ່ຫໍ້ຈາກປະເທດຍີ່ປຸ່ນທີ່ໄດ້ຮັບຄວາມນິຍົມຂອງຕະຫຼາດໄດ້ແກ່:ຮອນດ້າ (HONDA), ຢາມາຮ່າ (YAMAHA), ຊູຊູກິ (SUSUKI) ແລະ ອື່ນໆ ໂດຍປະມານ 90 ສ່ວນຮ້ອຍຂອງລົດຈັກທີ່ໃຫ້ບໍລິການເຊົ່າສິນເຊື່ອທັງໝົດ ຈະເປັນລົດຈັດຍີ່ຫໍ້ຮອນດ້າ HONDA ໃນນັ້ນມີກຸ່ມລູກຄ້າເປົ້າໝາຍຄື ກຸ່ມລູກຄ້າລາຍຍ່ອຍທົ່ວໄປ ເຊິ່ງມີລາຍຮັບໝັ້ນຄົງລະດັບໜ້ອຍ ເຖິງ ປານກາງ.

ທັງນີ້ ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກເມື່ອລູກຄ້າຕ້ອງການຊື້ລົດຈັກນຳຮ້ານຕົວແທນຈຳໜ່າຍລົດ ແຕ່ບໍ່ມີເງິນພຽງພໍ ຫຼື ຕ້ອງການຈ່າຍແບບຜ່ອນລູກຄ້າກໍ່ຈະວາງເງິນດາວ (ວາງເງິນຂັ້ນຕ່ຳ) ຈຳນວນໜຶ່ງ, ສ່ວນຈຳນວນທີ່ເຫຼືອລູກຄ້າຈະເຮັດສັນຍາເຊົ່າສິນເຊື່ອກັບບໍລິສັດ ເຊິ່ງລູກຄ້າທີ່ຕົກລົງເຮັດສັນຍາເຊົ່າສິນເຊື່ອກັບບໍລິສັດ ຈະຈ່າຍເງິນຊຳລະເງິນຄ່າງວດເປັນລາຍເດືອນໃຫ້ບໍລິສັດ ໂດຍສາມາດຄອບຄອງ ແລະ ນຳໃຊ້ລົດຈັກທີ່ເຊົ່າສິນເຊື່ອນັ້ນໄດ້ ເຊິ່ງການບຳລຸງຮັກສາຈະຢູ່ໃນຄວາມຮັບຜິດຊອບຂອງລູກຄ້າ ສ່ວນກຳມະສິດລົດຈັກຈະຖືກໂອນໃຫ້ແກ່ລູກຄ້າກໍ່ຕໍ່ເມື່ອລູກຄ້າຊຳລະຄ່າງວດຄົບຕາມສັນຍາແລ້ວ. ໃນກໍລະນີທີ່ລູກຄ້າຜິດສັນຍາໂດຍບໍ່ສາມາດຊຳລະເງິນຄ່າງວດ ຫຼື ຄ້າງຈ່າຍຕັ້ງແຕ່ 3 ງວດຕິດຕໍ່ກັນ ສັນຍາອາດຈະຖືກຍົກເລີກກ່ອນກຳນົດອາຍຸສັນຍາ ແລະ ລູກຄ້າຕ້ອງສົ່ງລົດຈັກຄືນໃຫ້ບໍລິສັດ.

ການໃຫ້ບໍລິການເຊົ່າສິນເຊື່ອນັ້ນ ບໍລິສັດຈະມີເຈົ້າໜ້າທີ່ວິເຄາະສິນເຊື່ອທີ່ຈະຄອຍໃຫ້ບໍລິການ ແລະ ຕິດຕໍ່ກັບຮ້ານຕົວແທນຈຳໜ່າຍລົດຈັກທີ່ເປັນຄູ່ຄ້າທາງທຸລະກິດ ກະຈາຍຢູ່ໃນເຂດນະຄອນຫຼວງວຽງຈັນ ກວມເອົາທັງຮ້ານຕົວແທນຈຳໜ່າຍລົດຂະໜາດໃຫຍ່ ແລະ ຮ້ານນ້ອຍຫຼາຍກວ່າ 30 ຮ້ານທີ່ມີຄວາມສຳພັນທີ່ດີກັບບໍລິສັດ. ທັງນີ້ເມື່ອລູກຄ້າເຂົ້າໄປຮ້ານຕົວແທນຈຳໜ່າຍລົດຈັກມີຄວາມຕ້ອງການຊື້ລົດຈັກ ເຈົ້າໜ້າທີ່ວິເຄາະສິນເຊື່ອຂອງບໍລິສັດ ຈະເປັນຜູ້ໃຫ້ຂໍ້ມູນການບໍລິການເຊົ່າສິນເຊື່ອແກ່ລູກຄ້າ ໂດຍຈະມີຜູ່ພິຈາລະນາ ແລະ ກວດສອບຄຸນສົມບັດຂອງຜູ້ໃຫ້ສິນເຊື່ອ ແລະ

ການດຳເນີນຕາມຂັ້ນຕອນ ເພື່ອອະນຸມັດສິນເຊື່ອແກ່ລູກຄ້າຕໍ່ໄປ ພ້ອມນີ້ ກໍ່ເພື່ອຕອບສະໜອງຄວາມຕ້ອງການໃຊ້ລົດຈັກຂອງລູກຄ້າຢ່າງທັນໃຈ, ລວມເຖິງການໃຊ້ເວລາອະນຸມັດສິນເຊື່ອ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງລູກຄ້າ ປຽບດັ່ງຍົກບໍລິການເຊົ່າສິນເຊື່ອໄປໄວ້ຮ້ານຕົວແທນຈຳໜ່າຍລົດຈັກ.

ນອກນັ້ນ ຈະເຫັນວ່າມີບັນດາຮ້ານຕົວແທນຈຳໜ່າຍລົດຈັກ ແມ່ນມີບົດບາດ ແລະ ຄວາມສຳຄັນຫຼາຍໃນຖານະຜູ້ສະໜອງຊ່ອງທາງບໍລິສັດໃນການເຂົ້າເຖິງລູກຄ້າ, ແນະນຳການບໍລິການດ້ານເຊົ່າສິນເຊື່ອຂອງບໍລິສັດ ດັ່ງນັ້ນ, ການຮັກສາຄວາມສຳພັນທີ່ດີ ແລະ ເພີ່ມຈຳນວນຮ້ານຕົວແທນຈຳໜ່າຍລົດຈັກ ຖືເປັນສິ່ງສຳຄັນໃນການປະກອບທຸລະກິດ ໃນການເຂົ້າເຖິງ ແລະ ຂະຫຍາຍລູກຄ້າຂອງບໍລິສັດ.

3.2.2 ເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ (ມືສອງ)

ບໍລິສັດ ໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ (ມືສອງ) ຈາກລົດຈັກທີ່ຍຶດມາຈາກລູກຄ້າທີ່ບໍ່ສາມາດຊຳລະເງິນຄ່າງວດຕາມສັນຍາໄດ້ ເຊິ່ງລັກສະນະ ແລະ ຂັ້ນຕອນການບໍລິການແມ່ນຈະຄ້າຍຄືກັນກັບການບໍລິການເຊົ່າສິນເຊື່ອລົດຈັກໃຫມ່. ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ງານແລ້ວ (ມືສອງ) ຖືເປັນອີກໜຶ່ງຜະລິດຕະພັນ ໃນການຂະຫຍາຍຖານລູກຄ້າຂອງບໍລິສັດໃຫມ່ ເພື່ອຕອບສະໜອງຄວາມຕ້ອງການລົດຈັກຍີ່ປຸ່ນມືສອງສະພາບດີໃຫ້ແກ່ຜູ້ບໍລິໂພກໃນຕະຫຼາດ ແລະ ໃນອານາຄົດ ບໍລິສັດຈະມີແຜນຂະຫຍາຍການບໍລິການດັ່ງກ່າວ ໄປຍັງຮ້ານຕົວແທນຈຳໜ່າຍລົດຈັກມືສອງ ໂດຍເນັ້ນຈາກປະເທດຍີ່ປຸ່ນຕາມຍີ່ຫໍ້ທີ່ກ່າວມາຂ້າງເທິງນີ້.

3.2.3 ບໍລິການສິນເຊື່ອລົດຈັກຄືນໃຫມ່


ບໍລິສັດມີການບໍລິການ ໃຫ້ສິນເຊື່ອລົດຈັກຄືນໃຫມ່ (Refinance) ໂດຍມີລູກຄ້າຜູ້ທີ່ມີຄວາມຕ້ອງການນຳໃຊ້ເງິນສາມາດນຳລົດຈັກຂອງຕົນ ທີ່ມີສັນຍາເຊົ່າສິນເຊື່ອກັບບໍລິສັດ ຫຼື ມີສັນຍາກັບບໍລິສັດເຊົ່າສິນເຊື່ອອື່ນມາຄ້ຳປະກັນ ເພື່ອທຳການປັບປຸງໂຄງສ້າງໜີ້ຂອງຜູ້ຂໍສິນເຊື່ອ ຫຼື ເອົາລົດຈັກມາຄ້ຳປະກັນການຂໍສິນເຊື່ອເພື່ອຮັບເງິນ ໂດຍຕ້ອງມີການລະບຸຊັດເຈນ ເຖິງວັດຖຸປະສົງຂອງການ Refinance ໃຫ້ຊັດເຈນເຊິ່ງບໍລິສັດຈະທຳການຕີມູນຄ່າລົດຈັກຕາມນະໂຍບາຍຂອງບໍລິສັດ, ການຄິດໄລ່ອັດຕາດອກເບ້ຍ ແລະ ຄ່າທຳນຽມຈະແຕກຕ່າງກັນກັບການໃຫ້ບໍລິການເຊົ່າ

ສິນເຊື່ອລົດຈັກ ສ່ວນຂະບວນການຂັ້ນຕອນການດຳເນີນງານຕ່າງໆ ແມ່ນຈະຄືກັນກັບການເຊົ່າສິນເຊື່ອລົດຈັກໃໝ່.

4. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ

4.1 ໂຄງຮ່າງຈັດຕັ້ງຂອງບໍລິສັດ

ໂຄງຮ່າງການຈັດຕັ້ງ



4.2 ຄະນະກຳມະການ

➢ ສະພາບໍລິຫານ

ຕາຕະລາງ: ສະພາບໍລິຫານ

ລຳດັບ	ຮູບຖ່າຍ	ສະພາບໍລິຫານ (Board of Directors)	ສັນຊາດ	ຕຳແໜ່ງ
1		ທ່ານ ຊາຄຣິດ ນັກສອນ	ໄທ	ປະທານ ສະພາບໍລິຫານ
2		ທ່ານ ນາງ ອິນທະວິໄລ ອຸດົມ	ລາວ	ຮອງປະທານ ສະພາບໍລິຫານ
3		ທ່ານ ມານິບ ຕຣີລິດວິໄລ	ໄທ	ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ (Executive Director)
4		ທ່ານ ນາງ ປຣາດຖະໜາ ນັກສອນ	ໄທ	ສະມາຊິກສະພາບໍລິຫານ
5		ທ່ານ ນາງ ສຸທິດາ ນັກສອນ	ໄທ	ສະມາຊິກສະພາບໍລິຫານ
6		ທ່ານ ກອງໄກ ນິດສະຍັນ	ໄທ	ສະມາຊິກສະພາບໍລິຫານ
7		ທ່ານ ວິນຍູ ຈີລະປະພາການ	ໄທ	ສະມາຊິກສະພາບໍລິຫານ (ອິດສະຫຼະ)
8		ທ່ານ ນັນທະພັດ ງາມປລັ່ງ	ໄທ	ສະມາຊິກສະພາບໍລິຫານ (ອິດສະຫຼະ)
9		ທ່ານ ທິຣະເມດ ອຸດທິພັດພິບູນ	ໄທ	ສະມາຊິກສະພາບໍລິຫານ (ອິດສະຫຼະ)

- **ຄະນະກຳມະການຂອງສະພາບໍລິຫານ**

ຄະນະກຳມະການຂອງສະພາບໍລິຫານ ປະກອບດ້ວຍ

1. ຄະນະກຳມະການກວດສອບ
2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ
3. ຄະນະກຳມະການຄັດເລືອກ
4. ຄະນະກຳມະການກຳນົດຄ່າຕອບແທນ
5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

4.2.1 ຄະນະກຳມະການກວດສອບ

ລ/ດ	ຄະນະກຳມະການກວດສອບ	ສັນຊາດ	ຕຳແໜ່ງ
1	ທ່ານ ກອງໄກ ນິດສະຍັນ	ໄທ	ປະທານ
2	ທ່ານ ນັນທະພັດ ງາມປລັ່ງ	ໄທ	ຄະນະກຳມະການ/ ສະມາຊິກອິດສະຫຼະ
3	ທ່ານ ທິຣະເມດ ອຸດທິພັດພິບູນ	ໄທ	ຄະນະກຳມະການ/ ສະມາຊິກອິດສະຫຼະ
4	ທ່ານ ວິນຍູ ຈີລະປະພາການ	ໄທ	ຄະນະກຳມະການ/ ສະມາຊິກອິດສະຫຼະ

4.2.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ລ/ດ	ຄະນະກຳມະການຄຸ້ມຄອງຄວາມສ່ຽງ	ສັນຊາດ	ຕຳແໜ່ງ
1	ທ່ານ ຊາຄຣິດ ນັກສອນ	ໄທ	ປະທານ
2	ທ່ານ ມານິບ ຕຣີລິດວິໄລ	ໄທ	ຄະນະກຳມະການ
3	ທ່ານ ທິຣະເມດ ອຸດທິພັດພິບູນ	ໄທ	ຄະນະກຳມະການ/ສະມາຊິກອິດສະຫຼະ
4	ທ່ານ ວິນຍູ ຈີລະປະພາການ	ໄທ	ຄະນະກຳມະການ/ສະມາຊິກອິດສະຫຼະ

4.2.3 ຄະນະກຳມະການຄັດເລືອກ

ລ/ດ	ຄະນະກຳມະການຄັດເລືອກ	ສັນຊາດ	ຕຳແໜ່ງ
1	ທ່ານ ຊາຄຣິດ ນັກສອນ	ໄທ	ປະທານ
2	ທ່ານ ກຽງໄກ ນິດສະຍັນ	ໄທ	ຄະນະກຳມະການ
3	ທ່ານ ນັນທະພັດ ງາມປລັ່ງ	ໄທ	ຄະນະກຳມະການ/ສະມາຊິກອິດສະຫຼະ

4.2.4 ຄະນະກຳມະການກຳນົດຄ່າຕອບແທນ

ລ/ດ	ຄະນະກຳມະການກຳນົດຄ່າຕອບແທນ	ສັນຊາດ	ຕຳແໜ່ງ
1	ທ່ານ ຊາຄຣິດ ນັກສອນ	ໄທ	ປະທານ
2	ທ່ານ ກຽງໄກ ນິດສະຍັນ	ໄທ	ຄະນະກຳມະການ
3	ທ່ານ ທິຣະເມດ ອຸດທິພັດພິບູນ	ໄທ	ຄະນະກຳມະການ/ສະມາຊິກອິດສະຫຼະ

4.2.5 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ລ/ດ	ຄະນະກຳມະການຄຸ້ມຄອງລາຍການທີ່ກ່ຽວພັນ	ສັນຊາດ	ຕຳແໜ່ງ
1	ທ່ານ ທິຣະເມດ ອຸດທິພັດພິບູນ	ໄທ	ປະທານ/ສະມາຊິກອິດສະຫຼະ
2	ທ່ານ ກຽງໄກ ນິດສະຍັນ	ໄທ	ຄະນະກຳມະການ
3	ທ່ານ ນັນທະພັດ ງາມປລັ່ງ	ໄທ	ປະທານ/ສະມາຊິກອິດສະຫຼະ

5. ຜົນການດຳເນີນທຸລະກິດ

5.1 ຜົນການດຳເນີນງານດ້ານການຕະຫຼາດ

ໃນໄລຍະ 3 ເດືອນ ປີ 2021, ບໍລິສັດມີການອະນຸມັດສິນເຊື່ອລົດຈັກ ຈຳນວນ 1.744 ຄັນ ຫຼື 21.420,1 ລ້ານກີບ ເຊິ່ງເພີ່ມຂຶ້ນ 17,6 ຂອງຈຳນວນເງິນໃຫ້ສິນເຊື່ອເມື່ອທຽບກັບ ໄລຍະ 3 ເດືອນ ຂອງປີ 2020

ຕາຕະລາງ :ການອະນຸມັດສິນເຊື່ອ

ປຽບທຽບການອະນຸມັດສິນເຊື່ອລົດຈັກຂອງບໍລິສັດໃນໄລຍະ 3 ເດືອນປີ 2020 ແລະ 2021				
ລາຍການ	ໄລຍະ 3 ເດືອນ ປີ 2020	ໄລຍະ 3 ເດືອນ ປີ 2021	ປ່ຽນແປງ	ອັດຕາສ່ວນຮ້ອຍ
ຈຳນວນສັນຍາ (ຄັນ)	1.580	1.744	+164	+10,4
ຈຳນວນເງິນໃຫ້ສິນເຊື່ອ(ລ້ານກີບ)	18.221,4	21.420,1	+3.198,7	+17,6

5.2 ລາຍຮັບ

ໃນໄລຍະ 3 ເດືອນ ປີ 2020 ແລະ ປີ 2021, ບໍລິສັດໄດ້ມີລາຍຮັບລວມທັງໝົດ 6.909,7 ລ້ານກີບ ແລະ 6.790,9 ລ້ານກີບ ຕາມລຳດັບ ຫຼຸດລົງ 1,7 ສ່ວນຮ້ອຍ

ລາຍຮັບ	ໄລຍະ 3 ເດືອນປີ 2020		ໄລຍະ 3 ເດືອນປີ 2021		ປ່ຽນແປງ	
	ລ້ານກີບ	%	ລ້ານກີບ	%	ລ້ານກີບ	%
ດອກເບ້ຍ	6.643,7	96,2	6.420,8	94,6	-222,9	-3,4
ລາຍຮັບອື່ນ	266,0	3,8	370,1	5,4	+104,1	+39,1
ລວມ ລາຍຮັບ	**6.909,7**	**100,0**	**6.790,9**	**100,0**	**-118,8**	**-1,7**

5.3 ລາຍຈ່າຍ

ໃນໄລຍະ 3 ເດືອນ ປີ 2020 ແລະ ປີ2021, ບໍລິສັດມີລາຍຈ່າຍທັງໝົດລວມທັງຄ່າໃຊ້ຈ່າຍທາງດ້ານການເງິນຈຳນວນ 4.304,1 ລ້ານກີບ ແລະ 4.375,7 ລ້ານກີບ ຕາມລຳດັບ.

ລາຍຈ່າຍ	ໄລຍະ 3 ເດືອນ ປີ 2020		ໄລຍະ 3 ເດືອນ ປີ 2021		ປ່ຽນແປງ	
	ລ້ານກີບ	%	ລ້ານກີບ	%	ລ້ານກີບ	%
ລາຍຈ່າຍໃນການບໍລິຫານ	3.381,7	78,6	3.227,7	73,8	-154,0	-4,6
ໜີ້ສົງໃສຈະສູນ	281,5	6,5	-60,8	-1,4	-342,3	-121,6
ຂາດທຶນຈາກອັດຕາແລກປ່ຽນ	9,7	0,2	787,5	18,0	+777,8	+8.018,6
ລາຍຈ່າຍການເງິນ	631,2	14,7	421,3	9,6	-209,9	-33,3
ລວມ ລາຍຈ່າຍ	4.304,1	100,0	4.375,7	100,0	+71,6	+1,7

5.4 ກຳໄລສຸດທິ ແລະ ອັດຕາກຳໄລສຸດທິ

ໃນໄລຍະ 3 ເດືອນ ປີ 2020 ແລະ ປີ 2021 ບໍລິສັດມີກຳໄລສຸດທິເທົ່າກັບ 2.154,5 ລ້ານກີບ ແລະ 2.064,1 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 31,2 ແລະ 30,4 ສ່ວນຮ້ອຍ ຕາມລຳດັບ ເມື່ອທຽບໃສ່ລາຍຮັບລວມ, ເຊິ່ງສະແດງໃຫ້ເຫັນວ່າອັດຕາສ່ວນກຳໄລສຸດທິບໍ່ມີການປ່ຽນແປງ. ເຖິງຢ່າງໃດກໍຕາມກຳໄລສຸດທິກ່ອນອາກອນ ຫຼຸດລົງຈາກ 2.605,6 ລ້ານກີບ ມາເປັນ 2.415,3 ລ້ານກີບ

5.5 ພັນທະອາກອນ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ເປັນບໍລິສັດ ມະຫາຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ດຳເນີນທຸລະກິດພາຍໃຕ້ກົດໝາຍຂອງ ສປປ ລາວ ດັ່ງນັ້ນ ບໍລິສັດ ມີໜ້າທີ່ມອບພັນທະອາກອນໃຫ້ກັບລັດຖະບານລາວ ປະກອບດ້ວຍ: ອາກອນມູນຄ່າເພີ່ມ, ອາກອນເງິນເດືອນ ແລະ ອາກອນກຳໄລ ໃນໄລຍະ 3 ເດືອນປີ 2021 ມີຈຳນວນ 262,2 ລ້ານກີບ ໃນນີ້ມີຄື:

ລ/ດ	ລາຍການ	ລ້ານກີບ
1	ອາກອນມູນຄ່າເພີ່ມ	27,1
2	ອາກອນເງິນເດືອນ	235,1
3	ອາກອນກຳໄລ	0,0
ລວມການມອບພັນທະອາກອນ		262,2

ຜູ້ອຳນວຍການໃຫຍ່

(ທ່ານ ມານີ ຕຣີລິດວິໄລ)

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ
"ບໍ່ໄດ້ກວດສອບ"

ສຳລັບງວດສາມເດືອນສິ້ນສຸດ ວັນທີ 31 ມີນາ 2021

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປຂອງບໍລິສັດ

ຄະນະບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດ") ໄດ້ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ພ້ອມທັງເອກະສານລາຍງານທາງການເງິນຂອງ ບໍລິສັດສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2021.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ, ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນເອກະສານຊ້ອນທ້າຍຂອງເອກະສານລາຍງານການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະເພື່ອນຳສະເໜີຖານະທາງການເງິນ, ຜົນຂອງການດຳເນີນທຸລະກິດ ແລະ ກະແສເງິນສົດຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານ, ຄະນະບໍລິຫານຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການລະເມີດທີ່ສຳຄັນຕໍ່ກັບມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທຸລະກິດຈະບໍ່ສາມາດດຳເນີນຕໍ່ໄປໄດ້.

ຄະນະບໍລິຫານມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງດ້ານບັນຊີທີ່ຖືກບັນທຶກໄວ້ໃນໄດ້ສະແດງເຖິງຄວາມຖືກຕ້ອງຢ່າງເໝາະສົມຢູ່ຕະຫຼອດເວລາກ່ຽວກັບຖານະການເງິນຂອງ ບໍລິສັດ ໃນມື້ທີ່ປິດບັນຊີພ້ອມທັງຮັບປະກັນວ່າເອກະສານລາຍງານການເງິນໄດ້ສອດຄ່ອງກັບນະໂຍບາຍທາງດ້ານບັນຊີທີ່ເໝາະສົມ.ຄະນະບໍລິຫານຍັງມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງ ບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາຄວາມບໍ່ໂປ່ງໃສ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສະບັບນີ້.

ການອະນຸມັດເອກະສານລາຍງານການເງິນ

ພວກຂ້າພະເຈົ້າຕົກລົງເຫັນດີອະນຸມັດຮັບຮອງເອົາເອກະສານລາຍງານການເງິນນະວັນທີ 31 ມີນາ 2021 ແລະ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວທີ່ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ

ໃນນາມຄະນະບໍລິຫານ

ທ່ານ ມານິບ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ
12 ພຶດສະພາ 2021

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ

ໃນວັນທີ 31 ມີນາ 2021

ຫົວໜ່ວຍ : ກີບ

	ບົດອະທິບາຍ	ໃນວັນທີ 31 ມີນາ 2021 "ບໍ່ໄດ້ກວດສອບ"	ໃນວັນທີ 31 ທັນວາ 2020
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ	4.1	8,174,106,865	12,404,353,323
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ			
ແລະ ເງິນກູ້ຜ່ອນຊຳລະ ພາຍໃນໜຶ່ງປີ	5	48,566,702,208	47,412,873,880
ຊັບສິນລໍຖ້າການຂາຍ	6	219,937,956	187,570,860
ຊັບສິນໝຸນວຽນອື່ນ	7	558,048,774	334,581,595
ລວມ ຊັບສິນໝຸນວຽນ		57,518,795,803	60,339,379,658
ຊັບສິນບໍ່ໝຸນວຽນ			
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ	8	2,000,002,700	2,000,002,700
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ			
ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	5	30,030,611,692	25,302,582,221
ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ	9	965,821,957	1,037,381,048
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	10	99,499,000	60,019,000
ລວມ ຊັບສິນບໍ່ໝຸນວຽນ		33,095,935,349	28,399,984,969
ລວມ ຊັບສິນ		**90,614,731,152**	**88,739,364,627**

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເປັນສ່ວນປະກອບຂອງລາຍງານການເງິນນີ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ (ຕໍ່)

ໃນວັນທີ 31 ມີນາ 2021

ຫົວໜ່ວຍ : ກີບ

	ບົດອະທິບາຍ	ໃນວັນທີ 31 ມີນາ 2021 "ບໍ່ໄດ້ກວດສອບ"	ໃນວັນທີ 31 ທັນວາ 2020
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງໃນການທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ	11	3,087,840,882	4,074,936,044
ໜີ້ສິນໝຸນວຽນພາຍໃຕ້ສັນຍາເຊົ່າທາງການເງິນ	12	-	78,339,545
ໜີ້ຕ້ອງສົ່ງອາກອນລາຍໄດ້		1,783,166,680	1,722,492,613
ໜີ້ສິນໝຸນວຽນອື່ນໆ		669,346,130	26,759,480
ລວມ ໜີ້ສິນໝຸນວຽນ		5,540,353,692	5,902,527,682
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	13	12,073,200,000	11,936,400,000
ໜີ້ສິນບໍ່ໝຸນວຽນອື່ນໆ		176,500,000	140,375,000
ລວມ ໜີ້ສິນບໍ່ໝຸນວຽນ		12,249,700,000	12,076,775,000
ລວມ ໜີ້ສິນທັງໝົດ		17,790,053,692	17,979,302,682
ທຶນເຈົ້າຂອງ			
ທຶນ			
ທຶນຈົດທະບຽນ	15	40,000,000,000	40,000,000,000
ທຶນຈົດທະບຽນທີ່ອອກ ແລະ ຊຳລະແລ້ວ		40,000,000,000	40,000,000,000
ສ່ວນເພີ່ມມູນຄ່າຮຸ້ນ		12,832,667,550	12,832,667,550
ກຳໄລສະສົມ			
ຈັດສັນແລ້ວ - ເງິນສຳຮອງຕາມກົດໝາຍ		4,026,672,320	4,026,672,320
ບໍ່ໄດ້ຈັດສັນ		15,965,337,590	13,900,722,075
ລວມ ທຶນເຈົ້າຂອງ		72,824,677,460	70,760,061,945
ລວມ ໜີ້ສິນ ແລະ ທຶນເຈົ້າຂອງ		**90,614,731,152**	**88,739,364,627**

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເປັນສ່ວນປະກອບຂອງລາຍງານການເງິນນີ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນໄດ້ຮັບ

ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2021

"ບໍ່ໄດ້ກວດສອບ"

ຫົວໜ່ວຍ : ກີບ

	ບົດອະທິບາຍ	2021	2020
ລາຍຮັບ			
ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ			
ແລະ ເງິນກູ້ຜ່ອນຊຳລະ		6,420,828,106	6,643,652,627
ລາຍຮັບອື່ນ	17	370,125,726	266,005,643
ລວມ ລາຍຮັບ		6,790,953,832	6,909,658,270
ລາຍຈ່າຍ			
ລາຍຈ່າຍໃນການບໍລິຫານ	18	3,227,698,324	3,381,735,334
ລາຍຈ່າຍໜີ້ສົງໄສຈະສູນ ແລະ ລາຍຈ່າຍໜີ້ສູນ	19	(60,784,859)	281,493,223
ຂາດທຶນສຸດທິຈາກອັດຕາແລກປ່ຽນ		787,488,868	9,654,482
ລາຍຈ່າຍການເງິນ		421,261,917	631,199,265
ລວມ ລາຍຈ່າຍ		4,375,664,250	4,304,082,304
ກຳໄລກ່ອນອາກອນລາຍຮັບ		2,415,289,582	2,605,575,966
ລາຍຈ່າຍອາກອນລາຍຮັບ	20	350,674,067	451,043,878
ກຳໄລສຸດທິ		**2,064,615,515**	**2,154,532,088**
ກຳໄລຕໍ່ຮຸ້ນຂັ້ນພື້ນຖານ (ກີບ)	15	52	54

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເປັນສ່ວນປະກອບຂອງລາຍງານການເງິນນີ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ

ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2021

"ບໍ່ໄດ້ກວດສອບ"

ຫົວໜ່ວຍ: ກີບ

	ບົດອະທິບາຍ	ມູນຄ່າຮຸ້ນ ທີ່ໄດ້ຊຳລະແລ້ວ	ສ່ວນເພີ່ມ ມູນຄ່າຮຸ້ນ	ກຳໄລສະສົມ		ລວມ ທຶນເຈົ້າຂອງ
				ຈັດສັນແລ້ວ ເງິນສຳຮອງ ຕາມກົດໝາຍ	ບໍ່ໄດ້ຈັດສັນ	
ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2020						
ຍອດຍົກມາ ໃນວັນທີ 1 ມັງກອນ 2020		40,000,000,000	12,832,667,550	3,252,194,002	10,930,417,218	67,015,278,770
ກຳໄລສຳລັບປີ	15	-	-	-	2,154,532,088	2,154,532,088
ຍອດເຫຼືອ ສິ້ນສຸດວັນທີ 31 ມີນາ 2020		40,000,000,000	12,832,667,550	3,252,194,002	13,084,949,306	69,169,810,858
ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2021						
ຍອດຍົກມາ ໃນວັນທີ 1 ມັງກອນ 2021		40,000,000,000	12,832,667,550	4,026,672,320	13,900,722,075	70,760,061,945
ກຳໄລສຳລັບປີ	15	-	-	-	2,064,615,515	2,064,615,515
ຍອດເຫຼືອ ສິ້ນສຸດວັນທີ 31 ມີນາ 2021		40,000,000,000	12,832,667,550	4,026,672,320	15,965,337,590	72,824,677,460

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເປັນສ່ວນປະກອບຂອງລາຍງານການເງິນນີ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານກະແສເງິນສົດ

ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2021

"ບໍ່ໄດ້ກວດສອບ"

ຫົວໜ່ວຍ : ກີບ

	ບົດອະທິບາຍ	2021	2020
ກະແສເງິນສົດຈາກກິດຈະກຳດຳເນີນງານ			
ກຳໄລກ່ອນລາຍຈ່າຍອາກອນລາຍຮັບ		2,415,289,582	2,605,575,966
ລາຍການປັບປຸງ:			
ໜີ້ສູນ ແລະ ໜີ້ສົງໄສຈະສູນ		(60,784,859)	281,493,223
ຫັກທຶດແທນຄ່ານາຍໜ້າລໍຖ້າຕັດບັນຊີ	4.2	974,342,237	1,150,225,953
ຂາດທຶນຈາກການສູນເສຍມູນຄ່າຂອງຊັບສິນລໍຖ້າການຂາຍ		5,000,000	16,250,000
ຄ່າຫຼ້ຍຫ້ຽນ		132,350,651	131,911,263
ລາຍຈ່າຍການເງິນ		421,261,917	631,199,265
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ເກີດຂຶ້ນຈິງ		646,360,966	-
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງ ໃນຊັບສິນດຳເນີນງານ ແລະ ໜີ້ສິນ		4,533,820,494	4,816,655,670
ການປ່ຽນແປງໃນຊັບສິນ ແລະ ໜີ້ສິນດຳເນີນງານ			
ເພີ່ມ ຂອງລູກໜີ້ຈາກສັນຍາເຊົ່າການເງິນ ແລະ ລູກໜີ້ຈາກເງິນກູ້ຜ່ອນຊຳລະ		(5,517,328,941)	(2,360,241,897)
ເພີ່ມ ຂອງຊັບສິນລໍຖ້າການຂາຍ		(37,367,096)	(172,391,646)
ຫຼຸດ (ເພີ່ມ) ຂອງຊັບສິນໝຸນວຽນອື່ນໆ		(232,100,267)	21,028,088
ຫຼຸດ ຂອງໜີ້ຕ້ອງສົ່ງໃນການທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ		(610,912,772)	(1,485,353,486)
ເພີ່ມ ຂອງໜີ້ສິນໝຸນວຽນອື່ນໆ		134,439,450	4,262,695
ເພີ່ມ ຂອງໜີ້ສິນບໍ່ໝຸນວຽນອື່ນໆ		36,125,000	13,000,000
ເງິນສົດຮັບຈາກການດຳເນີນງານ		(1,693,324,132)	836,959,424
ເງິນສົດຈ່າຍຄ່ານາຍໜ້າ		(1,279,500,000)	(1,186,350,000)
ເງິນສົດຈ່າຍຄ່າດອກເບ້ຍ		(788,811,221)	(715,959,786)
ເງິນສົດຈ່າຍຄ່າອາກອນລາຍຮັບ		(290,000,000)	(379,000,000)
ເງິນສົດສຸດທິໄດ້ມາຈາກ (ໃຊ້ໄປໃນ) ກິດຈະກຳດຳເນີນງານ		(4,051,635,353)	(1,444,350,362)

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເປັນສ່ວນປະກອບຂອງລາຍງານການເງິນນີ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານກະແສເງິນສົດ (ຕໍ່)

ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2021

"ບໍ່ໄດ້ກວດສອບ"

ຫົວໜ່ວຍ : ກີບ

	ບົດອະທິບາຍ	2021	2020
ກະແສເງິນສົດຈາກກິດຈະກຳການລົງທຶນ			
ເງິນສົດຈ່າຍໃນການຊື້ອຸປະກອນ ແລະ ສ່ວນທີ່ປັບປຸງອາຄານເຊົ່າ			
ແລະ ຊັບສິນບັດຄົງທີ່ບໍ່ມີຕົວຕົນ		(100,271,560)	(30,862,166)
ເງິນສົດສຸດທິໃຊ້ໄປໃນ ກິດຈະກຳການລົງທຶນ		(100,271,560)	(30,862,166)
ກະແສເງິນສົດຈາກກິດຈະກຳທາງການເງິນ			
ເງິນສົດໄດ້ຈ່າຍຈາກການກູ້ຢືມໄລຍະຍາວ			
ຈາກສະຖາບັນການເງິນ		-	(6,000,000,000)
ເງິນສົດໄດ້ຈ່າຍຈາກໜີ້ສິນຂອງສັນຍາເຊົ່າທາງການເງິນ		(78,339,545)	(10,673,836)
ເງິນສົດສຸດທິໄດ້ມາຈາກ (ໃຊ້ໄປໃນ) ກິດຈະກຳທາງການເງິນ		(78,339,545)	(6,010,673,836)
ເພີ່ມຂຶ້ນສຸດທິໃນເງິນສົດ ແລະ ສິ່ງທຽບເທົ່າເງິນສົດ		(4,230,246,458)	(7,485,886,364)
ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ໃນວັນທີ 1 ມັງກອນ		12,404,353,323	11,898,579,158
ເງິນສົດ ແລະ ສິ່ງທຽບເທົ່າເງິນສົດໃນວັນທີ 31 ມີນາ	4.1	**8,174,106,865**	**4,412,692,794**

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ເປັນສ່ວນປະກອບຂອງລາຍງານການເງິນນີ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
ສຳລັບງວດສາມເດືອນສິ້ນສຸດ ວັນທີ 31 ມີນາ 2021
"ບໍ່ໄດ້ກວດສອບ"

1. ຂໍ້ມູນທົ່ວໄປ ແລະ ການດຳເນີນທຸລະກິດຂອງບໍລິສັດ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສປປ ລາວ. ສຳນັກງານຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ຫຼັກ 5, ຖະໜົນໄກສອນ ພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ການດຳເນີນທຸລະກິດຫຼັກຂອງບໍລິສັດ ແມ່ນ ການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນ ເພື່ອຊື້ລົດຈັກ ແລະ ລົດໄຖ.

ບໍລິສັດໄດ້ສ້າງຕັ້ງຂຶ້ນໃນວັນທີ 2 ກັນຍາ 2011 ໂດຍໄດ້ຮັບໃບທະບຽນວິສາຫະກິດ ຈາກກະຊວງອຸດສາຫະກຳ ແລະ ການຄ້າ. ບໍລິສັດເລີ່ມດຳເນີນທຸລະກິດຫຼັງຈາກໄດ້ຮັບໃບອະນຸຍາດດຳເນີນທຸລະກິດເຊົ່າສິນເຊື່ອ ທີ່ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ("ທຫລ") ລົງວັນທີ 11 ມິຖຸນາ 2012. ໃນວັນທີ 20 ພະຈິກ 2017 ບໍລິສັດໄດ້ປ່ຽນຮູບແບບຂອງ ວິສາຫະກິດ ຈາກ ບໍລິສັດຈຳກັດມາເປັນບໍລິສັດມະຫາຊົນ ແລະ ປ່ຽນຊື່ບໍລິສັດຈາກບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ມາເປັນບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ.

ໃນວັນທີ 13 ມິຖຸນາ 2018, ບໍລິສັດຖືກອະນຸມັດໃນການຈຳໜ່າຍຮຸ້ນຄັ້ງທຳອິດໃຫ້ແກ່ສາທາລະນະໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍໃຊ້ຊື່ຫຍໍ້ວ່າ MHTL.

ຜູ້ຖືຮຸ້ນໃຫຍ່ຂອງບໍລິສັດແມ່ນ ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ (ສ້າງຕັ້ງຂຶ້ນໃນປະເທດໄທ).

ການແຜ່ລະບາດຂອງເຊື້ອພະຍາດໂຄໂລນາ 2019

ການແຜ່ລະບາດຂອງເຊື້ອພະຍາດໂຄໂລນ່າ 2019 ("ໂຄວິດ-19") ເລີ່ມຕັ້ງແຕ່ຕົ້ນປີ 2020 ໃນ ສປປ ລາວ ຊຶ່ງໄດ້ຮັບຜົນກະທົບຢ່າງຊັດເຈນຕໍ່ພາວະເສດຖະກິດຂອງ ສປປ ລາວ ແລະ ເສດຖະກິດໂລກໂດຍລວມ ລວມເຖິງພະນັກງານ, ລູກຄ້າ, ຮຸ້ນສ່ວນທຸລະກິດ ແລະ ການດຳເນີນທຸລະກິດບໍລິສັດ.

ເພື່ອຫຼຸດຜ່ອນຜົນກະທົບດັ່ງກ່າວ ບໍລິສັດໄດ້ພິຈາລະນາໃຫ້ຄວາມຊ່ວຍເຫຼືອແກ່ລູກຄ້າຂອງບໍລິສັດ ຕາມມາດຕະການຊ່ວຍເຫຼືອດ້ານສິນເຊື່ອສຳຫຼັບລູກຄ້າທີ່ໄດ້ຮັບຜົນກະທົບຈາກ ໂຄວິດ-19 ຊຶ່ງສອດຄ້ອງກັບມາດຕະການເພື່ອຊ່ວຍເຫຼືອລູກໜີ້ທີ່ໄດ້ຮັບຜົນກະທົບຈາກສະຖານະການທີ່ສົ່ງຜົນກະທົບຕໍ່ເສດຖະກິດລາວຂອງທະນາຄານແຫ່ງ ສປປ ລາວ ໂດຍໃຫ້ຜັກການຊຳລະເງິນຕົ້ນ ແລະ ດອກເບ້ຍ ແລະ ຫຼຸດອັດຕາດອກເບ້ຍຕາມເງື່ອນໄຂ ແລະ ໄລຍະເວລາທີ່ກຳນົດໂດຍບໍລິສັດ.

ຢ່າງໃດກໍຕາມ ຝ່າຍບໍລິຫານຂອງບໍລິສັດຈະຕິດຕາມຄວາມຄືບໜ້າຂອງສະຖານະການດັ່ງກ່າວຢ່າງຕໍ່ເນື່ອງ ແລະ ຈະປະເມີນຜົນກະທົບທາງການເງິນກ່ຽວກັບມູນຄ່າຂອງຊັບສິນ ປະມານການໜີ້ສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນຢ່າງສະໜ່ຳສະເໝີ.

2. ພື້ນຖານໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນປະຈຳປີ

2.1 ບໍລິສັດນຳໃຊ້ສະກຸນເງິນລາວກີບ "ກີບ" ໃນການບັນທຶກບັນຊີ ແລະ ເອກະສານລາຍງານການເງິນ ສຳລັບງວດສາມເດືອນສິ້ນສຸດ ວັນທີ 31 ມີນາ 2021 ຖືກກະກຽມຂຶ້ນຕາມພື້ນຖານໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ ແລະ ຫຼັກການບັນຊີ. ບໍລິສັດໄດ້ນຳສະເໜີເອກະສານລາຍງານການເງິນ ໂດຍໃຊ້ນະໂຍບາຍດັ່ງຕໍ່ໄປນີ້ ແລະ ນະໂຍບາຍບັນຊີທີ່ໄດ້ເປີດເຜີຍໄວ້ໃນ ບົດອະທິບາຍຂໍ້ 3 ຂອງເອກະສານລາຍງານການເງິນເຊັ່ນ:

- ໃນລາຍງານຖານະການເງິນໃນຕອນທ້າຍປີຂອງໄລຍະເວລາລາຍງານສຳລັບງວດສາມເດືອນສິ້ນສຸດ ວັນທີ 31 ມີນາ 2021 ແລະ ໃນລາຍງານຖານະການເງິນ ທີ່ໃຊ້ປຽບທຽບໃນຕອນທ້າຍປີບັນຊີຫຼ້າສຸດທີ່ຜ່ານມາ.
- ໃນລາຍງານຜົນໄດ້ຮັບສຳລັບປີບັນຊີຂອງໄລຍະເວລາລາຍງານສຳລັບງວດສາມເດືອນສິ້ນສຸດ ວັນທີ 31 ມີນາ 2021 ແລະ ຍອດສະສົມຮອດປີປະຈຸບັນ, ກັບໃນລາຍງານຜົນໄດ້ຮັບສຳລັບໄລຍະເວລາລາຍງານທີ່ປຽບທຽບກັນໄດ້ (ຍອດປະຈຸບັນ ແລະ ຍອດສະສົມໝົດປີ) ຂອງບັນຊີກ່ອນໜ້າ.
- ໃນລາຍງານປ່ຽນແປງທຶນເຈົ້າຂອງສະສົມຮອດປີບັນຊີປະຈຸບັນ, ກັບໃນລາຍງານສ່ວນປ່ຽນແປງທຶນເຈົ້າຂອງທີ່ປຽບທຽບກັນໄດ້ຍອດສະສົມຂອງບັນຊີກ່ອນໜ້າ.
- ໃນລາຍງານກະແສເງິນສົດສະສົມຮອດປີປະຈຸບັນ, ກັບໃນລາຍງານກະແສເງິນສົດທີ່ປຽບທຽບກັນໄດ້ຍອດສະສົມຂອງບັນຊີກ່ອນໜ້າ.

2.2 ໃນລາຍງານຖານະການເງິນ ໃນວັນທີ 31 ທັນວາ 2020 ທີ່ນຳມາສະແດງປຽບທຽບ ໄດ້ມາຈາກເອກະສານລາຍງານການເງິນຂອງບໍລິສັດເຊິ່ງໄດ້ກວດສອບແລ້ວ. ໃນລາຍງານຜົນໄດ້ຮັບ, ໃນລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃນລາຍງານກະແສເງິນສົດສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2020 ທີ່ນຳມາສະແດງປຽບທຽບນີ້ ຍັງບໍ່ທັນໄດ້ກວດສອບ.

2.3 ນະໂຍບາຍການບັນຊີຂອງບໍລິສັດທີ່ນຳໃຊ້ແມ່ນມີຄວາມແຕກຕ່າງຈາກມາດຕະຖານສາກົນດ້ານການລາຍງານການເງິນ ("IFRSs"). ສະນັ້ນ, ເອກະສານລາຍງານການເງິນງາງປີນີ້ ບໍ່ໄດ້ສະແດງເຖິງຖານະການເງິນ, ຜົນການດຳເນີນງານດ້ານການເງິນ ແລະ ກະແສເງິນສົດທີ່ສອດຄ່ອງກັບ ມາດຕະຖານສາກົນດ້ານການລາຍງານການເງິນ ("IFRSs").

2.4 ຜົນການດຳເນີນງານທີ່ບໍ່ທັນໄດ້ກວດສອບທີ່ນຳສະເໜີໃນງວດສາມເດືອນສິ້ນສຸດວັນທີ 31 ມີນາ 2021 ບໍ່ແມ່ນເຄື່ອງຊີ້ບອກ ຫຼື ເປັນການຄາດຄະເນກ່ຽວກັບຜົນການດຳເນີນງານໝົດປີ.

2.5 ເອກະສານລາຍງານການເງິນສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2021 ຄວນອ່ານປະກອບກັບ ເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2020 ເຊິ່ງໄດ້ມີການກວດສອບແລ້ວ.

2.6 ເອກະສານລາຍງານການເງິນ ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ 2021 ໄດ້ຖືກກະກຽມພາຍໃຕ້ພື້ນຖານການຕີມູນຄ່າຂອງມູນຄ່າຕົ້ນທຶນເດີມ ຍົກເວັ້ນທີ່ໄດ້ເປີດເຜີຍໄວ້ໃນນະໂຍບາຍບັນຊີທີ່ສຳຄັນ.

3. ນະໂຍບາຍການບັນຊີທີ່ສຳຄັນ

ເອກະສານລາຍງານການເງິນບໍ່ໄດ້ກວດສອບ ສຳລັບງວດສາມເດືອນ ຖືກກະກຽມຂຶ້ນຕາມນະໂຍບາຍການບັນຊີຂອງບໍລິສັດ ເຊິ່ງສອດຄ່ອງກັບນະໂຍບາຍ ການບັນຊີທີ່ໃຊ້ກະກຽມເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2020.

4. ການເປີດເຜີຍຂໍ້ມູນເພີ່ມເຕີມກ່ຽວກັບກະແສເງິນສົດ

4.1 ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ໃນວັນທີ 31 ມີນາ 2021 ແລະ 31 ທັນວາ 2020 ປະກອບມີດັ່ງນີ້:

	ໃນວັນທີ 31 ມີນາ 2021 ກີບ	ໃນວັນທີ 31 ທັນວາ 2020 ກີບ
ເງິນສົດໃນກຳມື	41.033.550	65.894.780
ເງິນຝາກທະນາຄານ	8.133.073.315	12.338.458.543
	8.174.106.865	12.404.353.323

4.2 ລາຍການທີ່ບໍ່ແມ່ນເງິນສົດຈາກຕົ້ນທຶນທາງກົງເລີ່ມຕົ້ນຂອງລູກໜີ້ຈາກສັນຍາເຊົ່າການເງິນ ແລະລູກໜີ້ຈາກເງິນກູ້ ຜ່ອນຊຳລະ ສຳລັບງວດສາມເດືອນສິ້ນສຸດ ວັນທີ 31 ມີນາ ປະກອບມີດັ່ງນີ້:

	31 ມີນາ 2021 ກີບ	31 ມີນາ 2020 ກີບ
ຍອດຍົກມາຕົ້ນທຶນທາງກົງເບື້ອງຕົ້ນ	2.574.465.482	3.032.978.953
ບວກ ເພີ່ມຂຶ້ນລະຫວ່າງປີ	1.279.500.000	1.186.350.000
ລົບ ລາຍຈ່າຍຈາກການຫັກຄ່າຫນ່ວຍໜ້າລໍຖ້າຕັດບັນຊີ	(974.342.237)	(1.150.225.953)
ຍອດຍົກໄປຕົ້ນທຶນທາງກົງເບື້ອງຕົ້ນ	2.879.623.245	3.069.103.000

5. ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ

ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະໃນວັນທີ 31 ມີນາ 2021 ແລະ 31 ທັນວາ 2020 ປະກອບມີດັ່ງຕໍ່ໄປນີ້:

	31 ມີນາ 2021		
	ບໍ່ເກີນ 1 ປີ ກີບ	ເກີນ 1 ປີ ເຖິງ 5 ປີ ກີບ	ລວມ ກີບ
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	1.810.370.005	305.254.000	2.115.624.005
ລົບ ດອກເບ້ຍລໍຖ້າຮັບ	(506.763.516)	(71.823.640)	(578.587.156)
	1.303.606.489	233.430.360	1.537.036.849
ບວກ ຕົ້ນທຶນທາງກົງເລີ່ມຕົ້ນ	9.898.721	9.763.846	19.662.567
	1.313.505.210	243.194.206	1.556.699.416
ລົບ ຄ່າສຳຮອງໜີ້ສົງໄສຈະເສຍ	(786.531.758)	(13.524.641)	(800.056.399)
ລວມໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	526.973.452	229.669.565	756.643.017
ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ			
ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	70.207.994.955	37.723.255.000	107.931.249.955
ລົບ ດອກເບ້ຍລໍຖ້າຮັບ	(21.317.456.150)	(8.876.235.085)	(30.193.691.235)
	48.890.538.805	28.847.019.915	77.737.558.720
ບວກ ຕົ້ນທຶນທາງກົງເລີ່ມຕົ້ນ	1.522.793.683	1.337.166.996	2.859.960.679
	50.413.332.488	30.184.186.911	80.597.519.399
ລົບ ຄ່າສຳຮອງໜີ້ສົງໄສຈະເສຍ	(2.373.603.732)	(383.244.784)	(2.756.848.516)
ລວມໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	48.039.728.756	29.800.942.127	77.840670.883
ລວມ	**48.566.702.208**	**30.030.611.692**	**78.597.313.900**

	31 ທັນວາ 2020		
	ບໍ່ເກີນ 1 ປີ ກີບ	ເກີນ 1 ປີ ເຖິງ 5 ປີ ກີບ	ລວມ ກີບ
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	1.927.297.178	265.304.000	2.192.601.178
ລົບ ດອກເບ້ຍລໍຖ້າຮັບ	(510.032.339)	(57.929.263)	(567.961.602)
	1.417.264.839	207.374.737	1.624.639.576
ບວກ ຕົ້ນທຶນທາງກົງເລີ່ມຕົ້ນ	11.086.985	8.455.558	19.542.543
	1.428.351.824	215.830.295	1.644.182.119
ລົບ ຄ່າສຳຮອງໜີ້ສົງໄສຈະເສຍ	(812.578.502)	(13.408.937)	(825.987.439)
ລວມໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	615.773.322	202.421.358	818.194.680

ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ			
ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	66.878.967.440	31.462.254.000	98.341.221.440
ລົບ ດອກເບ້ຍລໍຖ້າຮັບ	(19.145.950.699)	(7.061.229.923)	(26.207.180.622)
	47.733.016.741	24.401.024.077	72.134.040.818
ບວກ ຕົ້ນທຶນທາງກົງເລີ່ມຕົ້ນ	1.436.638.734	1.118.284.205	2.554.922.939
	49.169.655.475	25.519.308.282	74.688.963.757
ລົບ ຄ່າສຳຮອງໜີ້ສົງໄສຈະເສຍ	(2.372.554.917)	(419.147.419)	(2.791.702.336)
ລວມໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	46.797.100.558	25.100.160.863	71.897.261.421
ລວມ	**47.412.873.880**	**25.302.582.221**	**72.715.456.101**

ຍອດເຫຼືອຂອງໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະໃນວັນທີ 31 ມີນາ 2021 ແລະ 31 ທັນວາ 2020, ຈັດປະເພດຕາມອາຍຸຂອງຈຳນວນເດືອນມີດັ່ງລຸ່ມນີ້:

	ໃນວັນທີ 31 ມີນາ 2021 ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ ສຸດທິຈາກດອກເບ້ຍລໍຖ້າຮັບ ກີບ	**ໃນວັນທີ 31 ທັນວາ 2020 ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ ສຸດທິຈາກດອກເບ້ຍລໍຖ້າຮັບ ກີບ**
ຍັງບໍ່ຮອດກຳນົດ	62.787.552.089	54.414.161.391
ເກີນກຳນົດ 1 - 3 ເດືອນ	12.337.611.067	14.672.370.031
ເກີນກຳນົດ 4 - 5 ເດືອນ	583.760.725	1.145.245.622
ເກີນກຳນົດ 6 - 12 ເດືອນ	1.129.501.345	1.297.787.808
ເກີນກຳນົດຫຼາຍກວ່າ 12 ເດືອນ	2.436.170.343	2.229.115.542
ລວມ	79.274.595.569	73.758.680.394
ຄ່າສຳຮອງ ໜີ້ສົງໃສຈະເສຍ	3.556.904.916	3.617.689.775

ສຳລັບງວດສາມເດືອນສິ້ນສຸດ ວັນທີ 31 ມີນາ 2021 ແລະ 2020 ບໍ່ມີລາຍຈ່າຍໜີ້ສູນ.

6. ຊັບສິນລໍຖ້າການຂາຍ

ຊັບສິນລໍຖ້າການຂາຍ ໃນວັນທີ 31 ມີນາ 2021 ແລະ 31 ທັນວາ 2020 ປະກອບມີດັ່ງຕໍ່ໄປນີ້:

	31 ມີນາ 2021 ກີບ	31 ທັນວາ 2020 ກີບ
ຊັບສິນລໍຖ້າການຂາຍ - ລິດຈັກ	248.687.956	211.320.860
ລົບ ສ່ວນຫຼຸດມູນຄ່າຂອງຊັບສິນ	(28.750.000)	(23.750.000)
	219.937.956	187.570.860

7. ຊັບສິນໝຸນວຽນອື່ນ

ຊັບສິນໝຸນວຽນອື່ນ ໃນວັນທີ 31 ມີນາ 2021 ແລະ 31 ທັນວາ 2020 ປະກອບມີດັ່ງຕໍ່ໄປນີ້:

	31 ມີນາ 2021 ກີບ	31 ທັນວາ 2020 ກີບ
ລາຍຈ່າຍຈ່າຍລ່ວງໜ້າ	513.658.774	292.490.017
ເງິນຈ່າຍລ່ວງໜ້າ	11.116.000	9.239.640
ອາກອນມູນຄ່າເພີ່ມທີ່ໄດ້ຮັບ	-	8.633.089
ອື່ນໆ	33.274.000	24.218.849
	558.048.774	334.581.595

8. ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ

ໃນວັນທີ 31 ມີນາ 2021 ແລະ 2020, ບໍລິສັດໄດ້ມີເງິນແຮຝາກບັງຄັບທີ່ທະນາຄານແຫ່ງ ສປປລາວ (“ທຫລ”) ຈຳນວນ 2,000 ລ້ານກີບ, ໂດຍຄິດເປັນ 5% ຂອງທຶນຈົດທະບຽນທັງໝົດ. ເງິນສົດດັ່ງກ່າວບໍ່ສາມາດເອົາມານຳໃຊ້ໃນການດຳເນີນງານປະຈຳວັນ. ເງິນສົດດັ່ງກ່າວຈະຖືກສົ່ງຄືນໄດ້ຖ້າບໍລິສັດມີການຍຸບເລີກກິດຈະການ.

9. ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ

ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ ໃນວັນທີ 31 ມີນາ 2021 ແລະ 31 ທັນວາ 2020 ປະກອບມີດັ່ງຕໍ່ໄປນີ້:

	ໃນວັນທີ 30 ມີນາ 2021 ກີບ	ໃນວັນທີ 31 ທັນວາ 2020 ກີບ
ມູນຄ່າຕາມບັນຊີ ໃນວັນທີ 1 ມັງກອນ,	1.037.381.048	1.454.220.193
ຊື້ເພີ່ມລະຫວ່າງງວດ/ປີ	60.791.560	116.102.167
ຄ່າຫຼ້ຍຫ້ຽນ ພາຍໃນງວດ/ປີ	(132.350.651)	(532.941.312)
ມູນຄ່າສຸດທິຕາມບັນຊີ ໃນວັນສິ້ນສຸດຂອງງວດ/ປີ	965.821.957	1.037.381.048

10. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນ ໃນວັນທີ 31 ມີນາ 2021 ແລະ 31 ທັນວາ 2020 ປະກອບມີດັ່ງຕໍ່ໄປນີ້:

	ໃນວັນທີ 30 ມີນາ 2021 ກີບ	ໃນວັນທີ 31 ທັນວາ 2020 ກີບ
ມູນຄ່າຕາມບັນຊີ ໃນວັນທີ 1 ມັງກອນ,	60.019.000	42.493.727
ຊື້ເພີ່ມລະຫວ່າງງວດ/ປີ	39.480.000	60.019.000
ຄ່າຫຼ້ຍຫ້ຽນ ພາຍໃນງວດ/ປີ	-	(42.493.727)
ມູນຄ່າສຸດທິຕາມບັນຊີ ໃນວັນສິ້ນສຸດຂອງງວດ/ປີ	99.499.000	60.019.000

11. ໜີ້ຕ້ອງສົ່ງໃນການທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງໃນການທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ ໃນວັນທີ 31 ມີນາ 2021 ແລະ 31 ທັນວາ 2020 ປະກອບມີດັ່ງນີ້:

	ໃນວັນທີ 31 ມີນາ 2021 ກີບ	ໃນວັນທີ 31 ທັນວາ 2020 ກີບ
ໜີ້ຕ້ອງສົ່ງໃນການທຸລະກິດ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ເລກທີ 21)	100.333.000	190.075.000
ໜີ້ຕ້ອງສົ່ງໃນການທຸລະກິດ - ພາກສ່ວນອື່ນ	2.122.501.000	2.179.740.000
ໜີ້ຕ້ອງສົ່ງອື່ນໆໃນການທຸລະກິດ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ເລກທີ 21)	7.248.000	28.136.000
ອາກອນຕ້ອງສົ່ງອື່ນໆ	84.129.805	52.852.813
ລາຍຈ່າຍຄ້ຳປະກັນຄ້າງຈ່າຍ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ເລກທີ 21)	-	367.549.304
ຄ່າໃຊ້ຈ່າຍຄ້າງຈ່າຍ	773.629.077	1.256.582.927
	3.087.840.882	4.074.936.044

12. ໜີ້ສິນຂອງສັນຍາເຊົ່າທາງການເງິນ

ບໍລິສັດ ຫັນມານຳໃຊ້ສັນຍາເຊົ່າທາງການເງິນຂອງຍານພາຫະນະ. ລາຍຈ່າຍສັນຍາເຊົ່າຂັ້ນຕ່ຳທີ່ຕ້ອງຈ່າຍ ແລະ ມູນຄ່າ ປັດຈຸບັນຂອງ ໜີ້ສິນຂອງສັນຍາເຊົ່າທາງການເງິນ ໃນວັນທີ 31 ມີນາ 2021 ແລະ 31 ທັນວາ 2020 ໄດ້ສະຫຼຸບໄວ້ ດັ່ງນີ້:

	ລາຍຈ່າຍສັນຍາເຊົ່າຂັ້ນຕ່ຳ		ມູນຄ່າປັດຈຸບັນຂັ້ນຕ່ຳ ລາຍຈ່າຍສັນຍາເຊົ່າ	
	31 ມີນາ 2021	31 ທັນວາ 2020	31 ມີນາ 2021	31 ທັນວາ 2020
	ກີບ	ກີບ	ກີບ	ກີບ
ພາຍໃນ 1 ປີ	-	78.339.545	-	78.339.545
ລົບ ດອກເບ້ຍລໍຖ້າສະສາງ			-	-
			-	78.339.545

13. ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ

ໃນວັນທີ 31 ມີນາ 2021, ບໍລິສັດໄດ້ມີເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ 1,20 ລ້ານໂດລາສະຫະລັດ (ທຽບເທົ່າ 12.073 ລ້ານກີບ), ເຊິ່ງຖືອັດຕາດອກເບ້ຍຂອງອັດຕາເງິນຝາກເປັນເງິນຕາຕ່າງປະເທດບວກ 1.20% ຕໍ່ປີ, ເຊິ່ງໄດ້ຮັບການຄ້ຳປະກັນຈາກບໍລິສັດແມ່ ແລະ ຈະຮອດກຳນົດພາຍໃນ 3 ປີ ນັບແຕ່ວັນເບີກຖອນເງິນກູ້ຢືມ.

14. ຄັງສຳຮອງຕາມກົດໝາຍ

ຕາມມາດຕາ 156 ແລະ 157 ຂອງກົດໝາຍວ່າດ້ວຍວິສາຫະກິດແຫ່ງ ສປປລາວ ບໍລິສັດຈຳກັດຕ້ອງຫັກ ສິບສ່ວນຮ້ອຍຂອງ ກຳໄລສຸດທິພາຍຫຼັງໄດ້ຫັກເງິນຂາດທຶນເພື່ອສ້າງຄັງສຳຮອງໄວ້ແຕ່ລະປີ. ເມື່ອຄັງສຳຮອງນີ້ມີເງິນສະສົມໄດ້ເຄິ່ງ ໜຶ່ງຂອງທຶນຈົດທະບຽນຂອງບໍລິສັດຈຳກັດແລ້ວ ບໍລິສັດຈຳກັດສາມາດໂຈະການຫັກເງິນເຂົ້າຄັງສຳຮອງດັ່ງກ່າວ. ເວັ້ນເສຍແຕ່ກົດລະບຽບຂອງບໍລິສັດຈຳກັດໄດ້ກຳນົດໄວ້ຢ່າງອື່ນ. ຄັງສຳຮອງຕາມລະບຽບການຕ້ອງນຳໃຊ້ສະເພາະ ແຕ່ການຈ່າຍຖືມຂຸມຂາດທຶນຂອງບໍລິສັດເທົ່ານັ້ນ.

ຕາມມາດຕາ 195 ທີ່ໄດ້ລະບຸວ່າຕາມມາດຕາ 156 ແລະ 157 ໃຊ້ໄດ້ສະເພາະບໍລິສັດມະຫາຊົນ.

15. ກຳໄລຕໍ່ຮຸ້ນ

ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ ບໍລິສັດໄດ້ຄິດໄລ່ ຈຳນວນຮຸ້ນສາມັນສະເລ່ຍຕາມນ້ຳໜັກ ແລະກຳໄລຕໍ່ ຮຸ້ນ ມີດັ່ງນີ້:

	31 ມີນາ 2021	31 ມີນາ 2020
ຈຳນວນຮຸ້ນສາມັນນະວັນທີ 1 ມັງກອນ (ຮຸ້ນ)	40.000.000	40.000.000
ກຳໄລສຸດທິສຳລັບງວດສາມເດືອນ (ກີບ)	2.064.615.515	2.154.532.087
ກຳໄລຕໍ່ຮຸ້ນ (ກີບ)	52	54

16. ເງິນປັນຜົນ

ໃນວັນທີ 29 ພຶດສະພາ 2020 ກອງປະຊຸມວິສາມັນຜູ້ຖືຮຸ້ນໄດ້ລົງມະຕິໃນການຈ່າຍເງິນປັນຜົນ ຈາກກຳໄລສຸດທິປີ 2019 ໃຫ້ແກ່ ຜູ້ຖືຮຸ້ນຈຳນວນ 4.000 ລ້ານກີບ. ເງິນປັນຜົນນີ້ໄດ້ຈ່າຍແລ້ວໃນເດືອນ ມິຖຸນາ 2020.

ຈາກການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ທີ່ຈັດຂຶ້ນໃນວັນທີ 27 ເມສາ 2021 ຜູ້ຖືຮຸ້ນມີມະຕິອະນຸມັດຈ່າຍເງິນປັນຜົນຈາກກຳໄລສຸດທິ ແລະ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2020 ໃນອັດຕາ 155 ກີບ ຕໍ່ຮຸ້ນ,ລວມເປັນເງິນປັນຜົນຕ້ອງຈ່າຍທັງໝົດ 6.200 ລ້ານກີບ.ເງິນປັນຜົນດັ່ງກ່າວຈະຖືກຈ່າຍໃຫ້ກັບຜູ້ຖືຮຸ້ນໃນເດືອນ ພຶດສະພາ 2021.

17. ລາຍຮັບອື່ນ

ລາຍຮັບອື່ນສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ ປະກອບມີດັ່ງນີ້:

	31 ມີນາ 2021 ກີບ	31 ມີນາ 2020 ກີບ
ລາຍຮັບຈາກຄ່າປັບໄໝ - ລູກຄ້າ	307.125.420	210.791.738
ອື່ນໆ	63.000.306	55.213.905
	370.125.726	266.005.643

18. ລາຍຈ່າຍໃນການບໍລິຫານ

ລາຍຈ່າຍໃນການບໍລິຫານ ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ ປະກອບມີດັ່ງນີ້:

	31 ມີນາ 2021 ກີບ	31 ມີນາ 2020 ກີບ
ລາຍຈ່າຍພະນັກງານ	2.032.236.024	1.828.882.192
ຄ່າຕອບແທນຂອງຜູ້ບໍລິຫານ	220.250.000	236.712.400
ລາຍຈ່າຍສາທາລະນຸປະໂພກ	135.651.982	123.907.153
ລາຍຈ່າຍການຕະຫຼາດ	223.080.000	24.252.000
ຂາດທຶນສຸດທິຈາກການຂາຍລົດຈັກຍຶດຈາກລູກຄ້າ	135.541.179	375.655.723
ຄ່າຕອບແທນຜູ້ຊ່ຽວຊານ	71.877.208	77.637.370
ຄ່າຫຼ້ຍຫ້ຽນ	132.350.651	132.110.763
ລາຍຈ່າຍຄ່າຮັບແຂກ	1.408.000	23.737.100
ຄ່າເຄື່ອງໃຊ້ຫ້ອງການ	61.102.610	66.797.500
ອື່ນໆ	214.200.670	421.543.133
	3.227.698.324	3.311.235.334

19. ລາຍຈ່າຍໜີ້ສິງໄສຈະສູນ ແລະ ລາຍຈ່າຍໜີ້ສູນ

ໃນຊ່ວງໄຕມາດທຳອິດຂອງປີ 2021 ບໍລິສັດ ສາມາດບໍລິຫານຈັດການທີ່ດີໃນເລື່ອງການຈັດເກັບເງິນຈາກ ໜີ້ຕ້ອງ ຮັບຈາກສັນຍາເຊົ່າທາງການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ ເຊິ່ງໄດ້ມີການຕັ້ງສຳຮອງໜີ້ສິງໄສຈະສູນ ໄວ້ ໃນວັນທີ 31 ທັນວາ 2020. ດັ່ງນັ້ນ, ການຕັ້ງສຳຮອງໜີ້ສິງໄສຈະສູນຈຶ່ງໄດ້ດຳເນີນການກັບລາຍການ ແລະ ໄດ້ຫັກ ລ້າງກັບການສຳຮອງທີ່ເພີ່ມຂຶ້ນລະຫວ່າງໄຕມາດນີ້ແລ້ວ.

20. ລະບົບອາກອນ

ລະບົບອາກອນໃນ ສປປ ລາວ ມີລັກສະນະຫຼາກຫຼາຍ ແລະ ໄດ້ນຳມາຕີຄວາມໝາຍ. ສ່ວນຫຼາຍ ການຕີຄວາມໝາຍ ແມ່ນມີຄວາມແຕກຕ່າງກັນລະຫວ່າງເຈົ້າໜ້າທີ່ ແລະ ເຂດພື້ນທີ່ອາກອນແຕ່ລະບ່ອນ. ນອກນັ້ນ ວຽກງານອາກອນຖືກນຳ ມາທົບທວນ ແລະ ກວດສອບໂດຍເຈົ້າໜ້າທີ່ອາກອນຜູ້ທີ່ໄດ້ຮັບອະນຸຍາດໃຫ້ ກຳນົດການປັບໄໝຕາມກົດໝາຍຢ່າງເຄັ່ງຄັດ, ການລົງໂທດ ແລະ ຄິດໄລ່ດອກເບ້ຍປັບໄໝ.

ບໍລິສັດ ໄດ້ຮັບສິດທິປະໂຫຍດພາຍໃຕ້ກົດໝາຍອາກອນຂອງ ສປປ ລາວ ໂດຍການຫຼຸດອັດຕາອາກອນລາຍໄດ້ອີກ 5% ຈາກອັດຕາປົກກະຕິເປັນໄລຍະເວລາ 4 ປີ ນັບແຕ່ມື້ຈົດທະບຽນໃນຕະຫຼາດຫຼັກຊັບ.

ໃນວັນທີ 11 ກຸມພາ 2020, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 0424/ກຊງ ກ່ຽວກັບການບັງຄັບໃຊ້ ກົດໝາຍ ວ່າດ້ວຍສ່ວຍສາອາກອນສະບັບໃຫມ່ ສະບັບເລກທີ 67/ສພຊ ລົງວັນທີ 18 ກັນຍາ 2019 ມີຜົນນຳໃຊ້ຕັ້ງແຕ່ ວັນທີ 1 ມັງກອນ 2020 ເປັນຕົ້ນໄປ. ພາຍໃຕ້ກົດໝາຍສະບັບໃຫມ່,ມາດຕາທີ 16, ຂໍ້ທີ 2, ວັກທີ 3 ໄດ້ລະບຸວ່າອັດຕາກຳໄລຂອງ ບໍລິສັດທີ່ຈົດທະບຽນຕະຫລາດຫລັກຊັບລາວແມ່ນ 13% ເປັນໄລຍະເວລາ 4 ປີ ນັບແຕ່ວັນທີ່ຈົດທະບຽນເຂົ້າຕະຫລາດຫລັກ ຊັບລາວ.

21. ລາຍການກັບພາກສ່ວນທີ່ກ່ຽວຂ້ອງ

ບໍລິສັດມີລາຍການເຄື່ອນໄຫວທຸລະກິດທີ່ສຳຄັນ ກັບພາກສ່ວນທີ່ກ່ຽວຂ້ອງກັນ ເຊິ່ງແມ່ນຜູ້ບໍລິຫານສຳຄັນ ປະກອບ ມີຜູ້ອຳນວຍການ ແລະ ບໍລິສັດທີ່ພົວພັນກັບບຸກຄົນເຫຼົ່ານີ້ກໍ່ຖືເປັນ ພາກສ່ວນທີ່ກ່ຽວຂ້ອງ. ລາຍການເຄື່ອນໄຫວກັບ ພາກສ່ວນທີ່ກ່ຽວຂ້ອງນີ້ໄດ້ເກີດຂຶ້ນຕາມເງື່ອນໄຂ ແລະ ຂໍ້ກຳນົດພື້ນຖານທີ່ໄດ້ຕົກລົງກັນລະຫວ່າງບໍລິສັດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຈຳນວນເງິນ ແລະ ປະເພດຂອງຍອດທີ່ມີສາລະສຳຄັນ ໃນວັນທີ 31 ມີນາ 2021 ແລະ 31 ທັນວາ 2020 ແລະ ລາຍການເຄື່ອນໄຫວສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ ສະຫຼຸບໄດ້ດັ່ງຕໍ່ໄປນີ້.

ยอดในวันที 31 มีนา 2021 และ 31 ทันวา 2020:

ชื่บันชี/ชื่บໍລິສັດ	ສายພົວພັນ	ในวันที	
		31 มีนา 2021	31 ทันวา 2020
		ກີບ	ກີบ
ชนี้ต้องสิ่งในการทุละกิด			
เจบิ ธอนด้า	(1)	49.980.000	99.375.000
เจบิ ธอนด้า โนนสะหว่าง	(1)	24.942.000	79.604.000
เจบิ ธอนด้า ท่าง่อน	(1)	25.411.000	11.096.000
		100.333.000	190.075.000
ชนี้ต้องสิ่งอื่นๆ			
เจบิ ธอนด้า	(1)	2.556.000	13.020.000
เจบิ ธอนด้า โนนสะหว่าง	(1)	2.700.000	9.410.000
เจบิ ธอนด้า ท่าง่อน	(1)	1.992.000	5.706.000
		7.248.000	28.136.000
ลายจ่ายในการค้ำประกันค้างจ่าย			
บໍລິสัด มะหะทึน โธมดี้ง จำกัด	ผู้ถือหุ้น	-	367.549.304
		-	367.549.304

ลายการเคื่อนไหว สำลับงวดสามเดือนสิ้นสุดวันที 31 มีนา ปะกอบมีดังนี้:

ชื่บันชี/ชื่บໍລິสัด	ສายພົວພັน	ในวันที 31 มีนา	
		2021	2020
		ກີบ	ກີบ
ชื้ชับสินเพื่อการเช่าชื้			
เจบิ ธอนด้า	(1)	768.613.000	1.281.002.000
เจบิ ธอนด้า โนนสะหว่าง	(1)	551.933.000	751.258.000
เจบิ ธอนด้า ท่าง่อน	(1)	222.483.000	301.655.000
		1.543.029.000	2.333.915.000
ลายจ่ายค่าบายชา			
เจบิ ธอนด้า	(1)	45.000.000	80.050.000
เจบิ ธอนด้า โนนสะหว่าง	(1)	33.250.000	48.350.000
เจบิ ธอนด้า ท่าง่อน	(1)	12.750.000	21.900.000
		91.000.000	150.300.000

ລາຍຈ່າຍອື່ນໆ

ເຈບີ ຮອນດ້າ	(1)	5.064.000	15.660.000
ເຈບີ ຮອນດ້າ ໂນນສະຫວ່າງ	(1)	4.500.000	6.504.000
ເຈບີ ຮອນດ້າ ທ່າງ່ອນ	(1)	4.404.000	7.374.000
		13.968.000	29.538.000

ລາຍຈ່າຍດອກເບ້ຍ

ທ່ານ ນາງ ອິນທະວິໄລ ອຸດົມ	ຜູ້ຖືຮຸ້ນ ແລະ ຜູ້ອຳນວຍການ	-	58.219.800
ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ	ຜູ້ຖືຮຸ້ນ	-	572.979.465
		-	631.199.265

ລາຍຈ່າຍໃນການຄ້ຳປະກັນ

ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ	ຜູ້ຖືຮຸ້ນ	384.543.936	-
		384.543.936	-

(1) ຜູ້ອຳນວຍການຂອງບໍລິສັດ ແມ່ນຜູ້ຖືຮຸ້ນຂອງວິສາຫະກິດ

ຄ່າຕອບແທນຂອງຜູ້ບໍລິຫານ ສຳລັບລາຍການເຄື່ອນໄຫວ ສຳລັບງວດສາມເດືອນສິ້ນສຸດວັນທີ 31 ມີນາ ປະກອບມີດັ່ງນີ້:

	31 ມີນາ 2021	**31 ມີນາ 2020**
	ກີບ	**ກີບ**
ຜົນປະໂຫຍດໄລຍະສັ້ນ	220.250.000	236.712.400
	220.250.000	236.712.400

22. ພັນທະຜູກພັນ

22.1 ສັນຍາເຊົ່າດຳເນີນງານ

ບໍລິສັດມີພັນທະຜູກພັນຈາກສັນຍາເຊົ່າສຳນັກງານໄລຍະຍາວ ລາຍຈ່າຍຂັ້ນຕ່ຳທີ່ຕ້ອງຈ່າຍໃນອະນາຄົດ ຕາມສັນຍາເຊົ່າໃນ ວັນທີ 31 ມີນາ 2021 ແລະ 31 ທັນວາ 2020 ໄດ້ສະຫຼຸບໄວ້ດັ່ງນີ້:

	ໃນວັນທີ 31 ມີນາ 2021 ກີບ	ໃນວັນທີ 31 ທັນວາ 2020 ກີບ
ພາຍໃນ 1 ປີ	205.160.551	150.037.955
ເກີນ 1 ປີ ແຕ່ບໍ່ເກີນ 5 ປີ	1.375.994.624	1.381.246.738
ຫຼາຍກວ່າ 5 ປີ	392.972.370	362.514.661
	1.974.127.545	1.893.799.354

ຕາມສັນຍາເຊົ່າ, ຜູ້ໃຫ້ເຊົ່າກຳນົດໃຫ້ບໍລິສັດຊຳລະຄ່າເຊົ່າ 12 ເດືອນ ເປັນການຈ່າຍລ່ວງໜ້າໃນມື້ທີ່ເຮັດສັນຍາ. ສຳລັບ ງວດສາມເດືອນສິ້ນສຸດວັນທີ 31 ມີນາ 2021 ແລະ 2020 ຄ່າເຊົ່າຕາມສັນຍາເຊົ່າທີ່ໄດ້ຈ່າຍ ແລະ ຖືກບັນທຶກເປັນລາຍ ຈ່າຍໃນໃບລາຍງານຜົນໄດ້ຮັບເປັນຈຳນວນເງິນ 106,5 ລ້ານກີບ ແລະ 97,5 ລ້ານກີບ ຕາມລຳດັບ.

22.2 ໃນວັນທີ 31 ມີນາ 2021, ບໍລິສັດໄດ້ມີພັນທະຜູກພັນທີ່ກ່ຽວຂ້ອງກັບການຕິດຕັ້ງຊອບແວ ຈຳນວນ 99,5 ລ້ານກີບ.

23. ການອະນຸມັດການອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນເຫລົ່ານີ້ໄດ້ຮັບການອະນຸມັດ ແລະ ປະກາດໃຊ້ໂດຍຜູ້ອຳນວຍການຂອງບໍລິສັດ ໃນວັນທີ 12 ພຶດສະພາ 2021.

ທ່ານ ມ່ານ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ
ວັນທີ 12 ພຶດສະພາ 2021